ກະຊວງວິທະຍາສາດແລະເຕັກໂນໂລຊີ
ເອກະສານເຂົ້າ
ເລກທີ 2003 ກວຕ
ລົງວັນທີ 25 NOV 2013
ເວລາ 14:15
ສົ່ງເຖິງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************************

ນາຍົກລັດຖະມົນຕີ ເລກທີ 315 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 22.11.2013

# ດຳລັດ
## ຂອງນາຍົກລັດຖະມົນຕີ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 03 ກໍລະກົດ 2007.
- ອີງຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ ວ່າດ້ວຍການໂອນວຽກງານພັດທະນາຊັບພະຍາກອນມະນຸດ ຈາກຄະນະຈັດຕັ້ງສູນກາງພັກ ໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 02/ກມສພ, ລົງວັນທີ 06 ມີນາ 2013.
- ອີງຕາມໜັງສືສະເໜີຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1598/ສສກ, ລົງວັນທີ 07 ພະຈິກ 2013.

## ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການແບບແຜນວິທີການເຮັດວຽກ, ການນຳໃຊ້ງົບປະມານ ແລະ ຕາປະທັບ ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ແກ່ກຳມາທິການດັ່ງກ່າວ ໃນການຊີ້ນຳ ແລະ ຈັດຕັ້ງປະຕິບັດວຽກງານພັດທະນາຊັບພະຍາກອນມະນຸດໃນຂອບເຂດທົ່ວປະເທດ ໃຫ້ດຳເນີນໄປຕາມຂອບແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງປະເທດໃນແຕ່ລະໄລຍະ.

**ມາດຕາ 2: ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ມີຊື່ຫຍໍ້ວ່າ "ຄຊພຊ" ເປັນອົງການຈັດຕັ້ງຂອງລັດຖະບານ ທີ່ເຄື່ອນໄຫວບໍ່ປະຈຳການ, ຊຶ່ງມີຈຸດປະສານງານລວມ ແລະ ມີກອງເລຂາປະຈຳການຢູ່ກະຊວງສຶກສາທິການ ແລະ ກິລາ; ມີພາລະບົດບາດເປັນເສນາທິການໃຫ້ແກ່ສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກງານການພັດທະນາຊັບພະຍາກອນມະນຸດໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3: ໜ້າທີ່**

ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ມີໜ້າທີ່ຕົ້ນຕໍດັ່ງນີ້:

3.1 ຄົ້ນຄວ້າສ້າງ ແລະ ປັບປຸງແຜນຍຸດທະສາດ, ຂອບນະໂຍບາຍລວມ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດໃນຂອບເຂດທົ່ວປະເທດເປັນແຕ່ລະໄລຍະ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ແລະ ການເຊື່ອມໂຍງກັບສາກົນ ບົນພື້ນຖານຕາມຄວາມຮຽກຮ້ອງຕ້ອງການຂອງອົງການຈັດຕັ້ງຂອງພັກ, ຂອງລັດ ແລະ ເອກະຊົນ ນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ແລ້ວສະເໜີລາຍງານຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງ.

3.2 ຊີ້ນຳ, ຊຸກຍູ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ໃນການຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ນະໂຍບາຍ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ ທີ່ລັດຖະບານຮັບຮອງເອົາແລ້ວນັ້ນ ໄປຈັດຕັ້ງປະຕິບັດ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນ.

3.3 ຕິດຕາມ, ກວດກາ, ປະເມີນຜົນໃນການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ ນັບທັງດ້ານຄຸນນະພາບ ແລະ ຄວາມສອດຄ່ອງເປັນແຕ່ລະໄລຍະ.

3.4 ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດໃນແຕ່ລະໄລຍະ ໃຫ້ລັດຖະບານຮັບຊາບ ພ້ອມທັງຂໍທິດຊີ້ນຳຈາກລັດຖະບານ.

3.5 ສ້າງ ແລະ ນຳສະເໜີລັດຖະບານ ເພື່ອອອກນິຕິກຳທີ່ຈຳເປັນໃນການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ.

3.6 ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງພັກ ແລະ ລັດຖະບານ.

**ມາດຕາ 4: ຂອບເຂດສິດ**

ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ມີສິດດັ່ງນີ້:

4.1 ລະດົມທຸກກຳລັງແຮງໃນທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນໃຫ້